"ພວກພີ່ນ້ອງ ຈົ່ງສັນຣະເສີນ ສົມມະນາຄຸນພຣະເຈົ້າ ດ້ວຍບົດເພງສັກສິດ ບົດສະດຸດີ." (ອີງຕາມຄຳສັ່ງສອນຂອງນັກບຸນເປົາໂລ ເຖິງຊາວກຣິສຕະຊົນຢູ່ເມືອງໂກໂລຊາ) ພຣະກຣິສຕະຈັກ ກໍເຄີຍໃຊ້ບົດເພງສັກສິດຕ່າງ ໆ ເພື່ອສັນຣະເສີນ ພຣະເປັນເຈົ້າ. ດ້ວຍເຫດນີ້ "ສະດຸດີຊຸດສອງ" ໄດ້ມີມາສູ່ພໍ່ແມ່ ພີ່ນ້ອງ ກຣິສຕະຊົນລາວອີກ ຕາມຄວາມຮຽກຮ້ອງ ຕ້ອງການແລະຄວາມເຫັນດີເຫັນຊອບຂອງພວກພີ່ນ້ອງ. ໃນສະດຸດີຊຸດນີ້ ສເນີດ້ວຍເພງໃນກຳນົດ ພຣະກຣິສຕະດົມ ແລະ ພຣະກຣິສຕະສົມພົບ.

ສູນກາງວັດລາວກາໂຕລິກ ພ້ອມດ້ວຍຄນະຮ້ອງເພງສະດຸດີ ຂໍຂອບໃຈພວກພີ່ນ້ອງທີ່ໄດ້ສະແດງຄວາມດີອົກດີໃຈ ໄດ້ເພງ ສະດຸດີ ມາໄວ້ໃຊ້ ໃນໂອກາດພາວະນາສ່ວນຕົວ ຫລືໃນມະຫາບູຊາ ພຣະເຈົ້າ ອີກຄັ້ງນຶ່ງ. ຄນະສະດຸດີ ປະກອບດ້ວຍ :

ວາລັງແດງ ບຸນມີ - ຄຳດີ - ບຸບຜາ.
ຫມື່ນສແວງ ແສນ. ພິມມະນາວ ແກ້ວມະນີ.
ແລະ ຄຸນແມ່ ມາຣີ ປາສການ.

ທີ່ໄດ້ສະລະເວລາແລະເຫື່ອແຮງຕາມຄວາມສາມາດ. ຖ້າຂາດຕົກບົກພ່ອງປະການໃດ ກໍຂໍພວກພີ່ນ້ອງ ໃຫ້ຄວາມອະພັຍທັງສນັບ ສນູນ ຊຸ້ມຊູພວກເຮົາ...ເພາະສະດຸດີ ຊຸດສາມ ຍັງລໍຖ້າພວກພີ່ນ້ອງ ໃນໂອກາດຫນ້ານີ້.

---

ກຳນົດ : ພຣະກຣິສຕະດົມ
ພຣະກຣິສຕະສົມພົບ

AVENT/NOËL

CENTRE PASTORAL LAOTIEN
48, Rue des Pyrénées
75020 PARIS
Tél. 14372.38-27